ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 311 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2024

# ແຈ້ງການ

ເຖິງ : ຜູ້ອຳນວຍການຂອງ ບໍລິສັດມະຫາຊົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນ ກ່ອນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງປີ 2022.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມທະບຽນວິສາຫະກິດ ສະບັບເລກທີ 2078/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຜົນກອງປະຊຸມຮ່ວມກັນລະຫວ່າງ ກົມ ທວ ແລະ ສຳນັກງານ ຄຄຊ ໃນຄັ້ງວັນທີ 10 ມິຖຸນາ 2024.

ເພື່ອປະຕິບັດຕາມ ວັກສອງ ມາດຕາ 180 ຂອງກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງປີ 2022 ທີ່ໄດ້ກຳນົດວ່າ: "ໃນກໍລະນີ ບໍລິສັດມະຫາຊົນ ບໍ່ມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ຕ້ອງດຳເນີນການ ປ່ຽນແປງຮູບແບບບໍລິສັດ ຫຼື ຍຸບເລີກ ແລະ ການຊຳລະສະສາງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ ດ ໝວດທີ 2 ພາກທີ V ຂອງກົດໝາຍວ່າດ້ວຍວິສາຫະກິດ". ສະນັ້ນ, ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນວິສາຫະກິດ ຂໍຖືເປັນກຽດແຈ້ງມາຍັງ ຜູ້ອຳນວຍການຂອງ ບໍລິສັດມະຫາຊົນ ໃນຂອບເຂດທົ່ວປະເທດ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນແລ້ວ ທີ່ບໍ່ມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ແມ່ນໃຫ້ເຂົ້າມາພົວພັນກັບເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກໃບທະບຽນວິສາຫະກິດ ເພື່ອດຳເນີນການ ປ່ຽນແປງຮູບແບບບໍລິສັດເປັນຮູບແບບອື່ນ ຫຼື ຍຸບເລີກວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

2. ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນແລ້ວ ແຕ່ຍັງມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ແມ່ນໃຫ້ເຂົ້າໄປພົວພັນກັບ **ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຕັ້ງຢູ່ບ້ານໂພນສະອາດ, ໜ່ວຍ 20 ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ** ເພື່ອປະຕິບັດຕາມຂັ້ນຕອນລະດົມທຶນຜ່ານຕະຫຼາດທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຫຼັກຊັບ.

3. ການດຳເນີນຕາມຂໍ້ 1 ແລະ ຂໍ້ 2 ຂອງແຈ້ງການສະບັບນີ້ ແມ່ນໃຫ້ຈັດຕັ້ງປະຕິບັດ**ພາຍໃນເວລາ 60 ວັນ ນັບແຕ່ວັນແຈ້ງການສະບັບນີ້** ໄດ້ປະກາດລົງໃນເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ **(www.ned.moic.gov.la)** ເປັນຕົ້ນໄປ. ພາຍຫຼັງສິ້ນສຸດກຳນົດເວລາດັ່ງກ່າວແລ້ວ, ຖ້າຫາກ ບໍລິສັດມະຫາຊົນ ບໍ່ເຂົ້າມາດຳເນີນການໃດໜຶ່ງ ແມ່ນຈະຖືກມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດດ້ວຍ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ອະພິສິດ ແສງສຸລິວົງ

ບ່ອນນຳສົ່ງ:

- ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຊາບ ແລະ ຕິດຕາມ
- ໝາຍເລກໂທລະສັບ: (021) 217770

Scanned with CamScanner